ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄໍາໄຊ
ຄະນະສະເພາະກິດຂັ້ນແຂວງ

ເລກທີ...10...../ສພກ.ຂບຊ
ບໍລິຄໍາໄຊ, ວັນທີ26.ເມສາ..2021

# ຄໍາແນະນໍາ

## ກ່ຽວກັບການຈັດຕັ້ງປະຕິບັດຂໍ້ທີ່ 9 ຄໍາສັ່ງເລກທີ່ 05/ຂບຊ, 22/04/2021 ຂອງເຈົ້າແຂວງບໍລິຄໍາໄຊ

- ອີງຕາມ ຄໍາສັ່ງຂອງທ່ານເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 05/ຂບຊ, ລົງວັນທີ 22 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19.
- ອີງໃສ່ແຈ້ງການຂອງກະຊວງ ຍທຂ ສະບັບເລກທີ່ 242/ຍທຂ, 23/4/2021 ເລື່ອງ: ການຂົນສົ່ງໂດຍສານ ແລະ ສິນຄ້າຢູ່ ສປປ ລາວ ໃນໄລຍະສືບຕໍ່ປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID ~19.
- ອີງຕາມ ການຕົກລົງເຫັນດີຂອງກອງປະຊຸມຄະນະສະເພາະກິດ ປ້ອງກັນ, ຄວບຄຸມການລະບາດຂອງ COVID ~19 ຂັ້ນແຂວງ ຄັ້ງວັນທີ 23.4.2021.

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID ~19 ແຂວງບໍລິຄໍາໄຊ, ຂໍຖືເປັນກຽດ ແຈ້ງການແນະນໍາ ມາຍັງຄະນະສະເພາະກິດ ຂັ້ນເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຊາບວ່າ: ປະຈຸບັນແຂວງບໍລິຄໍາໄຊ ຍັງສືບຕໍ່ປິດດ່ານຊາຍແດນສາກົນ, ດ່ານປະເພນີ ແລະ ດ່ານທ້ອງຖິ່ນ ທີ່ມີຊາຍແດນຕິດຈອດກັບປະເທດທີ່ມີການລະບາດຂອງເຊື້ອພະຍາດ COVID ~19 ໃນຊຸມຊົນ ສໍາຫລັບບຸກຄົນທົ່ວໄປ. ຍົກເວັ້ນ ຜູ່ທີ່ມີຄວາມຈໍາເປັນ ໄດ້ຮັບອະນຸຍາດຈາກຄະນະສະເພາະກິດຂັ້ນສູນກາງ, ຂັ້ນແຂວງ. ສ່ວນພາຫະນະຂົນສົ່ງສິນຄ້າຂອງຜູ່ປະກອບການດ້ານການຂົນສົ່ງທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ສາມາດເຂົ້າອອກໄດ້ ແຕ່ຕ້ອງປະຕິບັດຕາມມາດຕະການຕ່າງໆທີ່ຄະນະສະເພາະກິດຂັ້ນແຂວງວາງອອກຢ່າງເຂັ້ມງວດ.

ເພື່ອຮັບປະກັນການປະຕິບັດ ມາດຕະການທີ່ 09 ຄໍາສັ່ງຂອງທ່ານເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 05/ຂບຊ, ລົງວັນທີ 22 ເມສາ 2021 ວ່າດ້ວຍ " ການເພີ່ມທະວີມາດຕະການສະກັດກັ້ນ ຄວບຄຸມ ແລະ ກະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID ~19" ຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນການລະບາດຂອງພະຍາດ COVID ~19 ຂໍຖືເປັນກຽດ ແຈ້ງຄໍາແນະນໍາມາຍັງຄະນະສະເພາະກິດຂັ້ນເມືອງໃນ 07 ເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໄດ້ຮັບຊາບ ເພື່ອເປັນເອກະພາບໃນການຈັດຕັ້ງປະຕິບັດມາດຕະການດັ່ງກ່າວຢູ່ແຂວງບໍລິຄໍາໄຊດັ່ງລຸ່ມນີ້:

**I. ການຄຸ້ມຄອງ, ການຈັດສົ່ງ-ຮັບ ແຮງງານລາວ (ແຮງງານຂອງແຂວງບໍລິຄໍາໄຊ) ທີ່ຕ້ອງການກັບຄືນທ້ອງຖິ່ນ (ແຂວງບໍລິຄໍາໄຊ).**

1. ແຮງງານແຂວງບໍລິຄໍາໄຊທີ່ໄປເຮັດວຽກຢູ່ປະເທດໃກ້ຄຽງ (ປະເທດໄທ) ທີ່ຕ້ອງການເດີນທາງກັບທ້ອງຖິ່ນຕ້ອງປະສານ ແລະ ແຈ້ງຫາພໍ່ແມ່ ຫລື ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ແຈ້ງຄະນະສະເພາະກິດຂັ້ນແຂວງ,ເມືອງ ເພື່ອຮັບຊາບໂດຍລະບຸ: ຊື່, ນາມສະກຸນ, ວັນເດືອນປີເກີດ, ທີ່ຢູ່ປະຈຸບັນ ບ້ານໃດ, ເມືອງໃດ, ໂດຍຜ່ານໂທລະສັບໝາຍ

สแกนด้วย CamScanner

ໂທ: 054 165 ແລະ 166 ຫລື 054 212 457, ຈາກນັ້ນ ຄະນະສະເພາະກິດຈະສັງລວມຂໍ້ມູນກ່ຽວຂ້ອງທັງໝົດ.

2. ໃຫ້ຄະນະສະເພາະກິດຂັ້ນແຂວງນຳສົ່ງຂໍ້ມູນແຮງງານແຂວງບໍລິຄຳໄຊທີ່ຕ້ອງການກັບຄືນທ້ອງຖິ່ນທີ່ສັງລວມໄດ້ ສົ່ງໃຫ້ຄະນະສະເພາະກິດຂັ້ນເມືອງ ເພື່ອກວດກາຢ່າງລະອຽດໂດຍກວດທຽບຂໍ້ມູນໃສ່ກັບປຶ້ມສຳມະໂນຄົວ ແລະ ມີການຢັ້ງຢືນຈາກຜູ້ປົກຄອງ ແລະ ການຈັດຕັ້ງບ້ານກ່ຽວຂ້ອງຢ່າງເປັນທາງການ, ຈາກນັ້ນສັງລວມແລ້ວນຳສົ່ງຄະນະສະເພາະກິດຂັ້ນແຂວງ.

3. ພາຍຫຼັງໄດ້ຂໍ້ມູນກ່ຽວກັບແຮງງານທີ່ຕ້ອງການກັບທ້ອງຖິ່ນລະອຽດແລ້ວ ມອບໃຫ້ ຕຳຫຼວດ ຕມ ກອງບັນຊາການ ປກສ ແຂວງ ສົມທົບກັບ ຕຳຫຼວດ ຕມ ແຂວງບຶງການ ເພື່ອປຶກສາຫາລື ແລະ ເປັນເອກະພາບໃນການກະກຽມຈັດສົ່ງແຮງງານແຂວງບໍລິຄຳໄຊທີ່ຕ້ອງການກັບຄືນທ້ອງຖິ່ນໃຫ້ແກ່ ຄະນະສະເພາະກິດຂັ້ນແຂວງ/ຂັ້ນເມືອງຄຸ້ມຄອງຕໍ່ໄປ.

4. ສ່ວນການກຳນົດຈຸດສົ່ງ-ມອບ ແຮງງານຂອງແຂວງບໍລິຄຳໄຊ ທາງຄະນະສະເພາະກິດຂັ້ນແຂວງ ຈະແຈ້ງເປັນກໍລະນີສະເພາະໄປ .

II. ການຄຸ້ມຄອງການຂົນສົ່ງໂດຍສານ ແລະ ສິນຄ້າ.

1. ໃຫ້ຢຸດຕິຊົ່ວຄາວການຂົນສົ່ງໂດຍສານ ທາງບົກ, ທາງນ້ຳ ລະຫວ່າງ ບັນດາເມືອງຕ່າງໆຂອງແຂວງບໍລິຄຳໄຊ, ລະຫວ່າງແຂວງບໍລິຄຳໄຊ ແລະ ນະຄອນຫລວງວຽງຈັນ ແລະ ລະຫວ່າງແຂວງບໍລິຄຳໄຊ ກັບ ບັນດາແຂວງອື່ນໆ.

2. ອະນຸຍາດໃຫ້ມີການຂົນສົ່ງ ສິນຄ້າພາຍໃນປະເທດ, ລະຫວ່າງປະເທດ, ຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກໃຫ້ປະຕິບັດດັ່ງນີ້:

2.1. ການຂົນສົ່ງສິນຄ້າພາຍໃນປະເທດ:

2.1.1. ການຂົນສົ່ງສິນຄ້າພາຍໃນທີ່ເຄື່ອນຍ້າຍຢູ່ພາຍໃນປະເທດ ຜ່ານບັນດາເມືອງ, ແຂວງ ແລະ ນະຄອນຫລວງ ແມ່ນສາມາດຂົນສົ່ງສິນຄ້າ ແລະ ອາຫານໄປຮອດປາຍທາງ ຫລື ລູກຄ້າໄດ້ເປັນປົກກະຕິ.

2.2. ການຂົນສົ່ງສິນຄ້າ ຂາເຂົ້າ, ຂາອອກ, ຜ່ານແດນ ແລະ ນຳເຂົ້າເພື່ອສົ່ງອອກ.

2.2.1. ສຳຫລັບລົດຂົນສົ່ງສິນຄ້າປະເພດສິນຄ້າອຸປະໂພກ, ບໍລິໂພກ ແລະ ນຳເຂົ້າທົ່ວໄປທີ່ເຂົ້າມາໃນແຂວງບໍລິຄຳໄຊ ຕ້ອງນຳສົ່ງສິນຄ້າໄປລົງຈຸດຖ່ຽນຖ່າຍ ຢູ່ບໍລິເວນດ່ານພາສີປາກຊັນ ທີ່ຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID ~19 ປະຈຳດ່ານໄດ້ກຳນົດ, ພາຍຫລັງເອົາສິນຄ້າລົງແລ້ວໃຫ້ກັບຄືນທັນທີ.

2.2.2. ສຳຫລັບລົດຂົນສົ່ງສິນຄ້າປະເພດນ້ຳມັນເຊື້ອໄຟ, ສິນຄ້າທາດແຫລວ, ອາຍແກັດ, ຢາງປູທາງ, ສິນຄ້າອັນຕະລາຍ, ສິນຄ້າກະສິກຳປະເພດບູດເນົ່າໄວ (ສັດທີ່ມີຊີວິດ, ຊີ້ນແຊ່ແຂງ, ໝາກໄມ້ສົດ ແລະ ອື່ນໆ), ວັດຖຸດິບສຳຫລັບການຜະລິດ ແລະ ສົ່ງອອກຄືນທີ່ໄດ້ຮັບການຍົກເວັ້ນພາສີອາກອນຈາກລັດຖະບານ ແລະ ວັດຖຸອຸປະກອນ, ເຄື່ອງຈັກຜະລິດເພື່ອຮັບໃຊ້ໂຄງການຂອງລັດຖະບານເຊັ່ນ: ໂຄງການກໍ່ສ້າງທາງລົດໄຟລາວ-ຈີນ, ເຂື່ອນໄຟຟ້າ, ເຄື່ອງຊ່ວຍເຫຼືອ ທາງດ້ານອຸປະກອນການແພດເພື່ອຮັບມືກັບການລະບາດພະຍາດ ແລະ ໄພພິບັດ ທີ່ບໍ່ສາມາດຖ່ຽນຖ່າຍ ຫຼື ມີຄວາມສ່ຽງດ້ານຄວາມປອດໄພໃນການຖ່ຽນຖ່າຍ ແມ່ນອະນຸຍາດໃຫ້ລົດຂົນສົ່ງຂອງຕ່າງປະເທດເຂົ້າມາຮອດປາຍທາງໄດ້, ພາຍຫຼັງເອົາສິນຄ້າລົງແລ້ວ ໃຫ້ກັບຄືນທັນທີ, ການຂົນສົ່ງສິນຄ້າປະເພດດັ່ງກ່າວ ຕ້ອງໄດ້ເຮັດໜັງສືຄ້ຳປະກັນທາງດ້ານຄວາມປອດໄພຈາກພະຍາດໂຄວິດ-19 ກັບຄະນະສະເພາະກິດປະຈຳດ່ານສາກົນ, ຊຶ່ງປະກອບມີ: ການກຳນົດເສັ້ນທາງຂົນສົ່ງ, ຕົ້ນທາງ- ປາຍທາງ, ມີໜັງສືຢັ້ງຢືນຂອງສິນຄ້າ ຫຼື ຕົວແທນຢູ່ ສ ປປ ລາວ ຫຼື ເຈົ້າຂອງໂຄງການ, ລະບຸມາດຕະການໃນການກິນຢູ່ ພັກ-ເຊົາ ຂອງຄົນຂັບລົດ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ COVID ~19.

2.2.3. ລົດຂົນສົ່ງສິນຄ້າຜ່ານແຂວງບໍລິຄຳໄຊ ເພື່ອຈະໄປປະເທດທີ່ສາມ ຕ້ອງມາຖ່ຽນຖ່າຍສິນຄ້າໃສ່ລົດຂົນສົ່ງຂອງລາວ ຢູ່ ຈຸດຖ່ຽນຖ່າຍຂາເຂົ້າ (ສາງພາສີ ບ້ານທາງຊຶງ) ທີ່ຄະນະສະເພາະກິດປະຈຳດ່ານກຳນົດ ແລ້ວໃຫ້ລົດຂົນສົ່ງທີ່ເປັນຄູ່ສັນຍາ ຂົນສົ່ງຕໍ່ໄປດ່ານຊາຍແດນຂາອອກ.

สแกนด้วย CamScanner

2.2.4. ໃນໄລຍະການແຜ່ລະບາດຂອງພະຍາດ COVID ~19 ເຫັນດີອະນຸຍາດໃຫ້ລົດຂົນສົ່ງສິນຄ້າ ແລະ ຕູ້ຄອນແທນເນີເປົ່າຂອງຕ່າງປະເທດທີ່ເປັນຄູ່ສັນຍາກັບ ບໍລິສັດຂົນສົ່ງຂອງ ສ ປປ ລາວ ສາມາດເຂົ້າມາຮັບສິນຄ້າ ຢູ່ ແຂວງບໍລິຄຳໄຊ ເພື່ອສົ່ງອອກໄດ້ ແຕ່ຕ້ອງໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ

-ສຳຫລັບການຂົນສົ່ງມັນຕົ້ນແຫ້ງເພື່ອສົ່ງອອກຂອງບັນດາບໍລິສັດ, ຜູ້ປະກອບການຕ່າງໆຢູ່ແຂວງບໍລິຄຳໄຊ , ສາມາດນຳພາຫະນະເຂົ້າມາຂົນສົ່ງຜົນຜະລິດດັ່ງກ່າວເພື່ອສົ່ງອອກໄດ້, ພາຍຫລັງຂົນສິນຄ້າສຳເລັດແລ້ວຕ້ອງກັບຄືນທັນທີ, ບໍ່ອະນຸຍາດໃຫ້ພັກເຊົາ ຫລື ຄ້າງຄືນ, ເວລາຂົນສິນຄ້າຜູ້ປະກອບການຕ້ອງກຳນົດເຂດສະເພາະໃຫ້ຜູ້ຂັບຂີ່ , ບໍ່ອະນຸຍາດໃຫ້ໄປພົວພັນສັງຄົມ ແລະ ຈອດແວ່ໂດຍບໍ່ຈຳເປັນ.

2.3. ຜູ້ປະກອບການ ແລະ ຄົນຂັບລົດ

2.3.1. ສຳລັບຜູ້ປະກອບການການຂົນສົ່ງ:

1. ຜູ້ປະກອບການຂົນສົ່ງ ຕ້ອງທຳຄວາມສະອາດສະຖານທີ່ຂອງບໍລິສັດ ແລະ ເພີ່ມຄວາມຖີ່ ໃນການທຳຄວາມສະອາດເຊັ່ນ: ສີດຢາຂ້າເຊື້ອພາຍໃນຫ້ອງຂັບ ແລະ ຕູ້ບັນຈຸສິນຄ້າ ກ່ອນການບັນຈຸສິນຄ້າໃສ່ລົດແຕ່ລະຄັ້ງ, ພ້ອມມີບັນທຶກການກວດກາສະພາບທາງດ້ານຮ່າງກາຍຂອງຄົນຂັບລົດປະຈຳວັນ ດ້ວຍເຄື່ອງກວດອຸນຫະພູມທາງດ້ານຮ່າງກາຍ ມີມາດຕະການໃນການແກ້ໄຂເຫດການສຸກເສີນເຊັ່ນ: ກໍລະນີພົບພະນັກງານຂອງຕົນມີອຸນນະພູມ 37, 5 ອົງສາ ຕ້ອງປ່ຽນຄົນຂັບລົດ ແລະ ໃຫ້ປະສານຫາພະແນກສາທາລະນະສຸກ ເພື່ອນຳສົ່ງໄປສະຖານທີ່ບໍລິການສາທາລະນະສຸກທີ່ຢູ່ໃກ້ຄຽງ, ພ້ອມທັງແນະນຳໃຫ້ຜູ້ກ່ຽວໃສ່ຜ້າປິດ ປາກ-ດັງ ແລະ ແຍກປ່ຽວຈາກຄົນອື່ນ.

2. ເອົາໃຈໃສ່ແນະນຳພະນັກງານທຸກຄົນໄປສັກວັກຊີນ COVID ~19 , ລ້າງມືດ້ວຍສະບູ, ເຫຼົ້າ 70% ຂຶ້ນໄປ , ເຈວ ຫຼື ຢາຂ້າເຊື້ອເປັນປົກກະຕິ ແລະ ໃຫ້ຕິດຕັ້ງຈຸດລ້າງມືໃຫ້ລູກຄ້າ, ຄົນຂັບລົດ, ລວມທັງພະນັກງານຕາມຈຸດຕ່າງໆຂອງສຳນັກງານໃຫ້ມີຄວາມສະດວກ ແລະ ປອດໂປ່ງ

2.3.2. ສຳລັບຄົນຂັບລົດຂົນສົ່ງ:

1. ຕ້ອງຖືໃບຂັບຂີ່, ບັດປະຈຳຕົວ ແລະ ເອກະສານປະຈຳລົດຕະຫຼອດເວລາ ເພື່ອອຳນວຍຄວາມສະດວກ ໃນການກວດກາຂອງເຈົ້າໜ້າທີ່ຕາມທາງ.

2. ຕ້ອງໃສ່ຜ້າປິດປາກ-ດັງ ຕະຫຼອດເວລາ ໃນການເຮັດວຽກ ຫຼື ເດີນທາງ.

3. ມີບັນທຶກການເດີນທາງ (TimeLine) ແລະ ອຸນນະພູມຂອງຕົນເອງ ໃນແຕ່ລະວັນ.

4. ຕ້ອງໝັ່ນລ້າງມືດ້ວຍນ້ຳສະອາດ ແລະ ສະບູ ຫຼື ເຫຼົ້າ 70% ຂຶ້ນໄປ.

5. ສຳລັບລົດຂົນສົ່ງສິນຄ້າຕ່າງປະເທດ ແມ່ນອະນຸຍາດໃຫ້ມີຄົນຂັບລົດພຽງແຕ່ 1 ຄົນ ຕໍ່ 1 ຄັນ ໂດຍບໍ່ອະນຸຍາດໃຫ້ ມີຜູ້ຕິດຕາມ ແລະ ຕ້ອງມີໜັ້ງສືຢັ້ງຢືນຜົນຂອງການກວດກາຫາ ເຊື້ອພະຍາດ COVID ~19 ເປັນລົບ ຢ່າງໜ້ອຍ 72 ຊົ່ວໂມງ ແລະ ສາມາດນຳໃຊ້ໄດ້ພາຍໃນ 7 ວັນ, ຖ້າເກີນກຳນົດດັ່ງກ່າວຜູ້ກ່ຽວຈະຕ້ອງໄດ້ກວດຄືນອີກ.

3. ໃຫ້ບັນດາຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດ COVID ~19 ຂັ້ນແຂວງ, ຂັ້ນເມືອງ , ພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ, ຄະນະສະເພາະກິດປະຈຳດ່ານສາກົນຕ່າງໆຢູ່ແຂວງບໍລິຄຳໄຊ, ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ປະກອບການ ປະຕິບັດຕາມຄຳແນະນຳສະບັບນີ້ຢ່າງເປັນເອກະພາບໃນທົ່ວແຂວງ.

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີຄຳແນະນຳສະບັບໃໝ່ມາປ່ຽນແທນ.

ຮອງເຈົ້າແຂວງບໍລິຄຳໄຊ

(ຫົວໜ້າຄະນະສະເພາະກິດຂັ້ນແຂວງ ປ້ອງກັນ ໂຄວິດ-19)

ບຸນເສັງ ປະທຳມະວົງ

สแกนด้วย CamScanner